**ຂໍ້ກຳນົດ ແລະ ຂອບເຂດການຈ້າງງານ**

**ການຜະລິດຂໍ້ຄວາມສຳຄັນ ແລະ ເຄື່ອງມືສື່ໂຄສະນາ**

## I. ຄວາມເປັນມາ

ສະມາຄົມສຸຂະພາບຊຸມຊົນ ແລະ ການມີສ່ວນຮ່ວມ (ສສຮ) ແມ່ນອົງການຈັດຕັ້ງສັງຄົມລາວ ເຮັດວຽກສົ່ງເສີມຊຸມຊົນເພື່ອຂໍການສະຫນັບສະຫນູນທາງດ້ານນະໂຍບາຍ, ສິດທິໃນການເຂົ້າເຖິງການບໍລິການສຸຂະພາບທົ່ວເຖິງ ແລະ ເທົ່າທຽມ ລວມທັງການສົ່ງເສີມຄວາມສະເຫມີພາບບົດບາດຍິງຊາຍ ແລະ ບົດບາດທາງເພດ ແລະ ຕ້ານການໃຊ້ຄວາມຮຸນແຮງທຸຮູບແບບຕໍ່ແມ່ຍິງ, ເດັກຍິງ, ເດັກນ້ອຍ ແລະ ຜູ້ໄດ້ຮັບຜົນກະທົບຈາກກັບພະຍາດໃນສປປລາວ.

ສສຮ ຮ່ວມມືກັບ ສູນວິໄຈພະຍາດຊຶມເຊື້ອລາວ-ຄຣິດຕົບ ເມຣິເອີ(CILM) ໂດຍໄດ້ຮັບທຶນສະໜັບສະໜູນຈາກ Expertise French. ພາຍໃຕ້ໂຄງການດັ່ງກ່າວ, ສະມາຄົມຍັງໄດ້ມີກິດຈະກຳການເຂົ້າເຖິງກຸ່ມເປົ້າໝາຍທີ່ເນັ້ນໃສ່ສອງກຸ່ມປະຊາກອນຄື: ແມ່ຍິງຖືພາ ແລະ ໄວໜຸ່ມ. ການເຂົ້າເຖິງແມ່ຍິງຖືພາແມ່ນໄດ້ແນະນຳໃຫ້ໄດ້ຮັບການບໍລິການຝາກທ້ອງ ແລະ ກວດຫາ 3 ເຊື້ອພະຍາດເຊັ່ນ: ເອສໄອວີ, ຊີຟີລິດ ແລະ ພະຍາດອັກເສບຕັບບີສສຮມີແຜນຜະລິດສື່ໂຄສະນາເພື່ອສົ່ງໃຫ້ທຸກຄົນສາມາດເຂົ້າເຖິງຄວາມຮູ້, ການບໍລິການຮດ້ານສຸຂະພາບຢ່າງທົ່ວເຖິງ, ເປັນມິດ, ມີຄວາມໝັ້ນໃຈໃນການມາຮັບບໍລິການ ແລະ ມີສ່ວນຮ່ວມໃນການຕິດຕາມປະເມີນຄຸນນະພາບການບໍລິການໃນສະຖານທີ່ໂຮງຫມໍ ແລະ ຊຸມຊົນ ໂດຍຜ່ານລາຍບຸກຄົນ, ກຸ່ມຄົນ ແລະ ສື່ອອນລາຍເຊັ່ນ: ຮູບພາບ, ຮູບເງົາ ແລະ ຂໍ້ຄວາມ.

## II. ຈຸດປະສົງສະເພາະ

- ເພື່ອເຜີຍແຜ່ຄວາມຮູ້, ຄວາມຄວາມເຂົ້າໃຈທາງກ່ຽວກັບການໄປພາກທ້ອງສຳລັບແມ່ຍິງຖືພາ ລວມທັງການເຂົ້າເຖິງການກວດຫາເຊື້ອພະຍາດເອສໄອວີ, ຊີຟີລິດ ແລະ ພະຍາດອັກເສບຕັບບີ.
- ເພື່ອໃຊ້ພື້ນທີ່ອອນລາຍເປັນແຫຼ່ງຂໍ້ມູນໃນການເຜີຍແຜ່ ກ່ຽວກັບ 3 ພະຍາດ (ພະຍາດເອສໄອວີ, ຊີຟີລິດ ແລະ ພະຍາດອັກເສບຕັບບີ) ລວມທັງການເຂົ້າເຖິງບໍລິການແບບງ່າຍດາຍ.
- ເພື່ອໃຫ້ຜູ້ໃຊ້ບໍລິການໄດ້ມີໂອກາດໃນການປະເມີນຄຸນນະພາບ ແລະ ໄຫ້ຂໍ້ແນະນຳໃນການປັບປຸງການໃຫ້ບໍລິການໃນສະຖານທີ່ໂຮງຫມໍ ແລະ ຊຸມຊົນ.

## III. ຫນ້າວຽກຫລັກ

- ຂຽນຂໍ້ຄວາມສຳຄັນ ແລະ ຮູບແບບເຄື່ອງມືທີ່ຕ້ອງຜະລິດ ໂດຍອີງຕາມຜົນລາຍງານການສຳຫລວດຂອງ KAP survey ທີ່ພວກເຮົາໄດ້ມີໃຫ້ແລ້ວ.  ເພື່ອນຳໄປໃຊ້ໃນການສື່ສານການໃຫ້ຄວາມຮູ້ກັບແມ່ຍິງຖືພາ ແລະ ກຸ່ມໄວໜຸ່ມ ກ່ຽວກັບຄວາມສຳຄັນຂອງການຝາກທ້ອງ ແລະ ກວດຫາເຊື້ອພະຍາດ ພະຍາດເອສໄອວີ, ຊີຟີລິດ ແລະ ພະຍາດອັກເສບຕັບບີ ໃນຊຸມຊົນຕົນເອງ
- ຂໍ້ຄວາມຕ້ອງມີຄວາມກະທັດຫັດ ແລະ ເຂົ້າໃຈງ່າຍທຸກຄົນສາມາດອ່ານແລ້ວເຂົ້າໃຈໄດ້ເລີຍໂດຍບໍ່ມີການຊັບຊ້ອນ.
- ຂໍ້ຄວາມຕ້ອງມີ 2 ສະບັບ ພາສາລາວລາວ ແລະ ພາສາອັງກິດ.
- ຂໍ້ຄວາມທີ່ໄດ້ຕ້ອງບໍ່ສ້າງເຖິງຄວາມແຕກແຍກ, ໃສ່ຮ້າຍປ້າຍສີ ແລະ ບໍ່ຜິດກົດໝາຍຂອງ ສປປ ລາວ.

**IV. ໄລຍະເວລາຂອງການຈັດຕັ້ງປະຕິບັດ ແລະ ຈັດສົ່ງງານ**

- ໄລຍະເວລາຂອງການດຳເນີນການຜະລິດແມ່ນ 10 ວັນນັບຕັ້ງແຕ່ມື້ທີ່ລົງລາຍເຊັນເປັນຕົ້ນໄປ, ເຊິ່ງຝ່າຍຖືກຈ້າງຈະຕ້ອງປະຕິບັດແບບຕາມເງື່ອນໄຂດັ່ງຕໍ່ໄປນີ້:
  - ວັນທີ 12/02/2024 ປະຊຸມກັບທີມງານໂຄງການເພື່ອສະເໜີຈຸດປະສົງ ແລະ ຮູບແບບທີ່ຕ້ອງການ.
  - ວັນທີ 13-16/02/2024 ໃຫ້ທີ່ປຶກສາດຳເນີນການເພື່ອຫາຂໍ້ຄວາມ ແລະ ສ້າງເຄື່ອງມືເພື່ອສື່ສານ ແລະ ໂຄສະນາ.
  - ວັນທີ 17/02/2024 ປະຊຸມເພື່ອນຳສະເໜີຂໍ້ຄວາມ ແລະ ເຄື່ອງມືເພື່ອສື່ສານ ແລະ ໂຄສະນາທີ່ໄດ້ສ້າງເພື່ອສະເໜີໃຫ້ກັບພາກສ່ວນທີ່ກ່ຽວຂ້ອງ.
  - ວັນທີ 18/02/2024 ການດັດແກ້ບົດ (ຖ້າຫາກມີການດັດແກ້).
  - ວັນທີ 19/02/2024 ປະຊຸມເພື່ອນຳສະເໜີຂໍ້ຄວາມ ແລະ ເຄື່ອງມືເພື່ອສື່ສານ ແລະ ໂຄສະນາໃຫ້ກັບພາກສ່ວນທີ່ກ່ຽວຂ້ອງທີ່ໄດ້ຖືກດັດແກ້ມາແລ້ວ.
  - ວັນທີ 20/02/2024 ການດັດແກ້ບົດ (ຖ້າຫາກມີການດັດແກ້).
  - ວັນທີ່ 21/02/2024 ສົ່ງບົດຄວາມສຳຄັນທີ່ໄດ້ວິເຄາະອອກມາຕ້ອງໄດ້ສົ່ງ ເປັນໄຟລ໌ ໃຫ້ສົມບູນແບບ ແລະ ຄົບຖ້ວນທີ່ສຸດ

**V. ເງື່ອນໄຂອື່ນໆ**

- ໃນການດຳເນີນການເລືອກຂໍ້ຄວາມສຳຄັນ ທີ່ປຶກສາຈະຕ້ອງໄດ້ມີເອກະສານຢືນຢັນໂຕຕົນທີ່ສາມາດກວດສອບໄດ້ແທ້, ກໍລະນີນີ້ແມ່ນບໍ່ຈຳກັດວ່າຈະເປັນບໍລິສັດ ຫຼື ໃນນາມບຸກຄົນ
- ເມື່ອໄດ້ຮັບຄັດເລືອກໃຫ້ເປັນທີ່ປຶກສາ ຈະຕ້ອງມີເອກະສານຕ່າງໆເພື່ອປະກອບເຂົ້າໃນການຈັດຊື້ຈັດຈ້າງເຊັ່ນ: ໃບຊີວະປະຫວັດ (CV), ໃບສະເໜີລາຄາ, ໃບຮຽກເກັບເງິນ, ໃບບິນ, ໃບສັນຍາ ຕ່າງໆເຫຼົ່ານີ້ເປັນຕົ້ນ